# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 4 ທັນວາ 2016 (12-4-2016)

# ພຣະຄຳຂອງພຣະເຈົ້າເຮັດໃຫ້ຍິນດີ

**ຈຸດສຳຄັນໃນບົດຮຽນ**: ພວກເຮົາພົບກັບຄວາມຍິນດີໃນເວລາຕິດຕາມພຣະຄຳຂອງພຣະເຈົ້າ.

**ຂໍ້ພຣະຄັມພີໃນບົດຮຽນ**: ເພງສັຣເສີນ 119:1-8

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ທ່ານເຄີຍພາກຸ່ມຄົນໄປກິນເຂົ້າຮ້ານອາຫານບໍ່? ບາງຄົນຢາກໄປກິນອາຫານຍີປຸ່ນ ສູຊິ, ແຕ່ມີອີກກຸ່ມນຶ່ງບອກ "ວ່າຖ້າໄປກິນປາດິບຍອມອິດທິວດີກວ່າ". ການທີ່ຕົກລົງໄປກິນບ່ອນດຽວກັນນີ້ເຫັນວ່າເປັນການຍາກທີ່ສຸດ. ຢ່າງໃດກໍດີເຫັນວ່າທຸກຄົນມີຄວາມຍິນດີເຊັ່ນ: ສົນທະນາກັບເພື່ອນເກົ່າ, ດື່ມນ້ຳເຢັນໆເວລາອາກາດຮ້ອນ, ນອນຢ່າງສະບາຍ.

ຕໍ່ໄປນີ້ແມ່ນຄຳຖາມໜ້າສົນໃຈດີ: ພຣະຄັມຂອງພຣະເຈົ້າແມ່ນສິ່ງມັກອ່ານຫລືບໍ່? ພຣະຄັມພີເປັນປຶ້ມເຮັດໃຫ້ມີຄວາມຊົມຊື່ນຍິນດີ-ເພງສັຣເສີນ 119 ສະແດງໃຫ້ພວກເຮົາຮູ້ຄວາມຍິນດີ. ທັງໝົດບົດມີ 176 ຂໍ້ ແຕ່ເປັນບົດຍາວທີ່ສຸດ. ບົດນີ້ອາດຍາວກວ່າ 30 ປຶ້ມອື່ນໆໃນພຣະຄັມພີ. ແຕ່ລະວັກໃຫ້ຕົວອັກສອນເປັນພາສາເຮັບເຣີ 22 ຕົວທີ່ເວົ້າເຖິງຄວາມຍິນດີໃນພຣະຄັມຂອງພຣະເຈົ້າ. ເພງສັຣເສີນບົດ 119 ໄດ້ຍົກຍ້ອງສັຣເສີນຄວາມຍິ່ງໃຫຍ່ຂອງພຣະເຈົ້າທີ່ພຣະອົງສາມາດຊ່ວຍຄວາມຕ້ອງການທຸກສະນິດໃນຊີວິດຂອງພວກເຮົາ. ນັ້ນເປັນສາເຫດໃຫ້ພວກເຮົາມີຄວາມຊົມຊື່ນຍິນດີໃນຊີວິດ.

**ພຣະຄັມພີກ່າວວ່າແນວໃດ?** ( ເບິ່ງຕາມຫົວຂໍ້ 1, 2 ແລະ 3 )

**ສຶກສາພຣະຄັມພີ**

**1. ເພງສັຣເສີນ 119:1-3:**

*1 ບັນດາຜູ້ທີ່ດີຮອບຄອບໃນທາງຂອງເຂົາກໍເປັນສຸກ ຄືຜູ້ທີ່ດຳເນີນຕາມພຣະທັມຂອງພຣະເຈົ້າ 2 ຜູ້ທີ່ຮັກສາບັນດາ*
*ພຣະທັມຄຳສອນຂອງພຣະອົງກໍເປັນສຸກ ຄືຜູ້ທີ່ສແວງຫາພຣະອົງດ້ວຍສຸດໃຈ 3 ຜູ້ທີ່ບໍ່ທຳຜິດ ແຕ່ເດີນຕາມທາງຂອງ*
*ພຣະອົງ.*

ພຣະທັມໃນບົດນີ້ໄດ້ເລີ້ມໂດຍການກ່າວເຖິງຄວາມສຸກ ຊຶ່ງເປັນປໂຍດແລະເປັນພຣະພອນແກ່ເຮົາ ຄຳເວົ້ານີ້ໄດ້ກ່າວເຖິງຄວາມສຸກອັນແທ້ຈິງ ຊຶ່ງພຣະເຈົ້າເປັນຜູ້ປະທານໃຫ້ ໂລກບໍ່ສາມາດໃຫ້ເຮົາໄດ້. ນີ້ເປັນທາງນຶ່ງທີ່ນັກປະພັນເພງສັຣເສີນໄດ້ຍົກເອົາໃຊ້ ເພາະທັງ 176 ຂໍ້ໄດ້ກ່າວເຖິງແລະຢັ້ງຢືນວ່າຄົນໃດທີ່ມີຊີວິດຕາມຄຳສອນນີ້ຈະໄດ້ຮັບພຣະພອນ. ໝາຍຄວາມວ່າຖ້າຄົນໃດຕ້ອງການຄວາມສຸກອັນເລີກເຊິ່ງຢ່າງນີ້ ຕ້ອງມອບຕົວເອງຖວາຍແດ່ພຣະເຈົ້າ.

ມີຄຳຖາມວ່າຄົນເຮົາຕ້ອງມີຊີວິດທີ່ບໍ່ມີຕຳໜິແມ່ນບໍ ເພື່ອຈະມີຄວາມຊົມຊື່ນຍິນດີ? ເຮົາຕ້ອງບໍ່ເຮັດຫຍັງຜິດແມ່ນບໍ່? ຂອບພຣະຄຸນພຣະເຈົ້າ, ບໍ່ແມນແນວນັ້ນດອກ. ພຣະເຢຊູເທົ່ານັ້ນທີ່ມີຊີວິດປາສຈາກຄວາມບາບ ພຣະອົງພຽງເທົ່ານັ້ນທີ່ມີຄວາມປີຊາສາມາດ. ຜູ້ຂຽນພຣະທັມເພງສັຣເສີນໄດ້ຮຽກຮ້ອງໃຫ້ຄົນທັງຫລາຍພຍາຍາມເຊື່ອຟັງພຣະ

ຄຳພຣະເຈົ້າເພີ່ມຂຶ້ນອີກ. ນັ້ນແຫລະແມ່ນຄວາມໝາຍວ່າ ດຳເນີນຊີວິດຕາມຄຳສັ່ງຂອງພຣະເຈົ້າ.

**<u>ໝາຍເຫດ</u>**: ຄຳສອນຂອງພຣະເຈົ້າບໍ່ແມ່ນທາງລົບ ຫລືເປັນການບັງຄັບແຕ່ຢ່າງໃດ. ພຣະຄຳພຣະເຈົ້າບໍ່ແມ່ນອາວຸດໃຊ້ທຳລາຍຄົນອື່ນ ແຕ່ແມ່ນເຄື່ອງມືທີ່ພຣະເຈົ້າຜູ້ມີຄວາມຮັກຢາກໃຫ້ພວກເຮົາໃຊ້ໃນຊີວິດຂອງພວກເຮົາ.

ການຖວາຍຕົວຕໍ່ພຣະເຈົ້ານັ້ນຕ້ອງໝັ້ນຄົງສມ່ຳສເມີແລະຈິງໃຈ. ຂໍ້ 1 ຜູ້ຂຽນພຣະທັມເພງສັຣເສີນໄດ້ກ່າວເຖິງການກະທຳພາຍນອກຂອງເຮົາ ແຕ່ຂໍ້ 2 ໄດ້ເວົ້າເຖິງພາຍໃນຈິດໃຈຂອງເຮົາ. ຄົນມີຄວາມສຸກແທ້ຖວາຍຕົວເອົາໃຈໃສ່ຕໍ່ພຣະຄຳພຣະເຈົ້າເພາະພວກເຂົາໄດ້ສແວງຫາພຣະເຈົ້າຈົນສຸດຈິດສຸດໃຈ. ເມື່ອພວກເຮົາສແວງຫາພຣະເຈົ້າຜ່ານທາງພຣະຄຳຂອງພຣະອົງ ເຮົາກໍຈະໄດ້ພົບກັບພຣະອົງ.

ພຣະຄັມພີຈະນຳພາທ່ານໄປຫາພຣະເຈົ້າສເມີ ເໝືອນກັບພຣະເຈົ້າໄດ້ກ່າວຕໍ່ພວກອິສຣາເອນໃນຊ່ວງເຂົາເຈົ້າຕົກເປັນຊະເລີຍວ່າ, ຖ້າເຈົ້າສແວງຫາເຮົາດ້ວຍສຸດໃຈແລະເຈົ້າຈະໄດ້ພົບເຮົາ. (ຢຣມ 29:13).

ຂໍ້ 3 ບໍ່ໄດ້ເວົ້າເຖິງຜູ້ທີ່ໄດ້ຮັບພອນຫລາຍເທົ່າໃດ ແຕ່ໄດ້ເຖິງພຣະຄຳຂອງພຣະເຈົ້າ. ພຣະຄຳຂອງພຣະເຈົ້າຈະນຳເຮົາໄປສູ່ຄວາມຊອບທັມ ເພື່ອເຮົາຈະໄດ້ "ເຮັດຕາມທາງຂອງພຣະອົງ" ພຣະຄຳຂອງພຣະເຈົ້າບໍ່ເຄີຍນຳເຮົາໃຫ້ໄປເຮັດຜິດຫລືເຮັດບາບ.

| |
|---|
| *ໃນ 2-3 ປີທີ່ຜ່ານມາ ການພົວພັນຣະຫວ່າງທ່ານກັບພຣະຄັມພີຂອງທ່ານເປັນຢ່າງໃດ? ອະທິບາຍ...ສັ້ນໆ* |

## 2. <u>ເພງສັຣເສີນ 119:4-6</u>:

*4 ພຣະອົງໄດ້ຕັ້ງຂໍ້ບັງຄັບຂອງພຣະອົງໄວ້ ໃຫ້ເຮົາທັງຫລາຍປະຕິບັດຕາມຢ່າງເຄັ່ງຄັດ 5 ໂອ ຂໍໃຫ້ທາງທັງຫລາຍຂອງຂ້າພຣະອົງໝັ້ນຄົງໃນການຮັກສາກົດລະບຽບຂອງພຣະອົງ 6 ຂ້າພຣະອົງຈະບໍ່ໄດ້ຮັບຄວາມອັບອາຍ ຖ້າເອົາໃຈໃສ່ຕໍ່ພຣະບັນຍັດທັງສິ້ນຂອງພຣະອົງ.*

ໃຫ້ເອົາໃຈໃສ່ຄຳວ່າ "ຂໍ້ບັງຄັບ" ໃນຂໍ້ 4 ເພາະພວກເຮົາເຫັນວ່າເຮົາມີຄວາມຍິນດີເມື່ອເຮົາເຊື່ອຟັງພຣະຄຳຂອງພຣະເຈົ້າ ແລະຂໍ້ 4 ນີ້ໄດ້ເຕືອນພວກເຮົາວ່າ ເຮົາຕ້ອງເຊື່ອຟັງພຣະຄຳຂອງພຣະເຈົ້າ. ດັ່ງນັ້ນ, ຄວາມຍິນດີບໍ່ແມ່ນການເລືອກເອົາ ແຕ່ເປັນສິ່ງເກີດຂຶ້ນກັບຊີວິດຂອງຜູ້ທີ່ເຊື່ອຟັງຢ່າງແນ່ນອນ.

ການເຊື່ອຟັງພຣະເຈົ້ານັ້ນແມ່ນການຍອມຮັບຮູ້ວ່າພຣະອົງເປັນຜູ້ມີອຳນາດ. ຂໍ້ 4 ສອນພວກເຮົາວ່າ ພຣະອົງໄດ້ປົກຄອງມະນຸດທຸກຄົນ: “ພຣະອົງຊົງຕັ້ງຂໍ້ບັນຍັດຂອງພຣະອົງໄວ້ ເພື່ອເຮົາທຸກຄົນຈະປະຕິບັດຕາມຢ່າງເຄັ່ງຄັດ.” ໃນຄຳສັ່ງນີ້ເວົ້າເຖິງອຳນາດຂອງພຣະທັມອີກເຊັ່ນກັນ.

ຄຳວ່າ "ພຣະຄຳສັ່ງ" ກໍເປັນອີກຄຳນຶ່ງທີ່ເວົ້າເຖິງພຣະທັມຂອງພຣະເຈົ້າ-ຊຶ່ງເປັນການໃຊ້ສັບປ່ຽນຂອງນັກຂຽນປຶ້ມເພງສັຣເສີນບົດ 119. ຄຳເວົ້ານີ້ແມ່ນສິ່ງພຣະເຈົ້າໃຊ້ສັນຍາກັບປະຊາກອນຂອງພຣະອົງເໝືອເຈົ້ານາຍໃຊ້ກັບພວກຄົນໃຊ້ໃນບ້ານ. ພຣະເຈົ້າບໍ່ໃຫ້ຄຳເຫັນ, ບໍ່ໃຫ້ຄຳແນະນຳ ດັ່ງນັ້ນເຮົາຕ້ອງຍອມຮັບສິດອຳນາດຂອງພຣະອົງ.

ພວກເຮົາຈຳເປັນຕ້ອງຍອມຮັບພຣະອຳນາດຂອງພຣະເຈົ້າ ໂດຍຮັບວ່າຕົນເອງເປັນຄົນພົກພ່ອງ: “ໃນການຮັກສາກົດເກນຂອງພຣະອົງ” ຜູ້ຂຽນເພງສັຣເສີນຮູ້ດີວ່າຄວາມຍິນດີເຂົ້າມາໃນຊີວິດດ້ວຍການເຊື່ອຟັງພຣະເຈົ້າເທົ່ານັ້ນ, ເຖິງປານນັ້ນ ເພິ່ນຕ້ອງຍອມຮັບຄວາມບົກພ່ອງແລະຄວາມອ່ອນແອຂອງເພິ່ນ.

ພວກເຮົາໄດ້ເຫັນຄວາມສຳຄັນສາມຢ່າງໃນການສາຣະພາບ ດັ່ງລຸ່ມນີ້:

1. **ຄວາມສັດຊື່.** ຜູ້ຂຽນເພງສັຣເສີນໄດ້ເປີດເຜີຍຄວາມປົກພ່ອງຂອງເພິ່ນ, ເພິ່ນເປັນຄົນດີ ດັ່ງນັ້ນທ່ານຕ້ອງອ່ານເພງສັຣເສີນ 119 ທັງໝົດເພື່ອຈະເຂົ້າໃຈຄຳສອນນີ້. ແຕ່ເພິ່ນເອງຍັງສາຣະພາບເຖິງຄວາມຜິດແລະບົກພ່ອງ ເພື່ອຈະຮັກສາພຣະທັມຂອງພຣະເຈົ້າເອົາໄວ້ຢ່າງໝັ້ນຄົງ.
2. **ຖິ້ມໃຈເກົ່າ.** ຜູ້ຂຽນເພງສັຣເສີນບໍ່ພໍໃຈກັບຊີວິດຂອງຕົນເອງ. ເພິ່ນຕ້ອງການປ່ຽນແປງໃຫ້ດີຂຶ້ນ ຄວາມປາຖນາຢ່າງນັ້ນເປັນໄປໄດ້ງ່າຍໆ: "ຖ້າຂ້ານ້ອຍໄດ້ຖວາຍຕົນເພື່ອຮັກສາກົດເກນຂອງພຣະອົງເທົ່ານັ້ນ."
3. **ທູນຂໍຄວາມຕ້ອງການ.** ຜູ້ຂຽນເພງສັຣເສີນກ່າວວ່າເພິ່ນຕ້ອງການຄວາມຊ່ອຍເຫລືອຈາກພຣະເຈົ້າ. ຕາມທັມມະຊາດຂອງມະນຸດແລ້ວບໍ່ສາມາດຈະປ່ຽນທາງຊີວິດຂອງຕົນເອງໄດ້. ພວກເຮົາຈຳເປັນຕ້ອງເພິ່ງພຣະເຈົ້າຜູ້ມີອຳນາດໂດຍຍອມໃຫ້ອົງພຣະຄຣິດຊ່ອຍເພື່ອເອົາຊະນະຕໍ່ການທົດລອງ ແລະອົດທົນຕໍ່ຄວາມທຸກລຳບາກ.

ພຣະເຈົ້າຈັດທາງໃຫ້ພວກເຮົາອອກຈາກຄວາມເປັນທຸກ ທາງຄວາມຄິດ ຈິດໃຈ ແລະຮ່າງກາຍ. ພວກເຮົາຜູ້ທີ່ເຊື່ອຈະບໍ່ໄດ້ຮັບຄວາມອັບອາຍຂາຍໜ້າ ຖ້າທັງໃຈແລະຕາຂອງພວກເຮົາສຸມໃສ່ ເພ່ງເບິ່ງພຣະຄຳຂອງພຣະເຈົ້າ.

*ເຮັດແນວໃດ ເຮົາຈຶ່ງຈະບໍ່ໃຫ້ພຣະຄຳເປັນພຽງຄຳແນະນຳ ແຕ່ເປັນຄຳສັ່ງທີ່ເຮົາຈະຕ້ອງປະຕິບັດຕາມ?*

### 3. <u>ເພງສັຣເສີນ 119:7-8</u>:

*7 ຂ້າພຣະອົງຈະສັຣເສີນພຣະອົງດ້ວຍໃຈທ່ຽງຕົງ ເມື່ອຂ້າພຣະອົງຮຽນຮູ້ກົດຫມາຍອັນຊອບທັມຂອງພຣະອົງ*
*8 ຂ້າພຣະອົງຈະຖືກົດລະບຽບຂອງພຣະອົງ ຂໍຢ່າຊົງປະລະຂ້າພຣະອົງເລີຍເທາະ.*

ຂ້າພະເຈົ້າຈະຮູ້ໄດ້ຢ່າງໃດວ່າຜູ້ໃດເປັນຄົນເອົາໃຈໃສ່ຕໍ່ພຣະຄຳຂອງພຣະເຈົ້າ? ຄົນເຫລົ່ານັ້ນເພິ່ງພຣະເຈົ້າທຸກພາກສ່ວນຂອງຊີວິດ. ເຂົາເຈົ້າຮູ້ດີວ່າພວກເຂົາບໍ່ສາມາດເຮັດຕາມຄຳສັ່ງສອນຂອງພຣະເຈົ້າໄດ້ດ້ວຍຄວາມສາມາດຂອງຕົນເອງ. ຂໍ້ 7-8 ໄດ້ສອນພວກເຮົາໃຫ້ຮຽນຮູ້ສອງຢ່າງເຖິງເຣື່ອງການຊົງສະຖິດຢູ່ນຳຂອງພຣະເຈົ້າແລະເມື່ອເຮົາສແວງຫາການເຊື່ອຟັງພຣະຄຳພຣະອົງ. ນຶ່ງ, ພວກເຮົາເພິ່ງການຊົງສະຖິດຢູ່ນຳຂອງພຣະເຈົ້າດ້ວຍການສັຣເສີນ. ຂໍ້ 7 ສອນພວກເຮົາຢ່າງແຈ່ມແຈ້ງວ່າພວກເຮົາສາມາສັຣເສີນພຣະເຈົ້າໄດ້ໃນເມື່ອພວກເຮົາໄດ້ຮູ້ຈັກກັບພຣະຄຳຂອງພຣະອົງ. ພວກເຮົາໄດ້ເຫັນຄວາມຈິງໃນເຣື່ອງນີ້ໃນພຣະທັມເພງສັຣເສີນ 119. ຕົວຢ່າງ:

- "ຂ້າແດ່ອົງພຣະຜູ້ເປັນເຈົ້າ ຂໍພຣະອົງຊົງຮັບເອົາຄຳອ້ອນວອນ ຂອບພຣະຄຸນຈາກຂ້ານ້ອຍ ແລະສັ່ງສອນຂໍ້ຄຳສັ່ງຂອງພຣະອົງໃຫ້ແກ່ຂ້ານ້ອຍ" (ຂໍ້ 108)
- "ຂ້ານ້ອຍສັຣເສີນພຣະອົງມື້ລະເຈັດເທື່ອ ຍ້ອນເຣື່ອງກົດໝາຍອັນຊອບທັມຂອງພຣະອົງ" (ຂໍ້ 164)
- "ຂ້ານ້ອຍຈະສັຣເສີນພຣະອົງຢູ່ເລື້ອຍໆ ເພາະພຣະອົງສັ່ງສອນກົດລະບຽບຂອງພຣະອົງໃຫ້ແກ່ຂ້ານ້ອຍ" (ຂໍ້ 171)

ການຮູ້ຈັກກັບພຣະເຈົ້າແລະນະມັສການພຣະເຈົ້າໄປດ້ວຍກັນ. ພວກເຮົາຈະສັຣເສີນແລະນະມັສການດ້ວຍຄວາມຈິງໃຈຫລາຍຂຶ້ນ ເຮັດໃຫ້ເຮົາເຂົ້າໃຈຫລາຍຂຶ້ນໃນພຣະຄຳຂອງພຣະອົງ.

ສອງ, ພວກເຮົາເພິ່ງການຊົງສະຖິດຢູ່ນຳຂອງພຣະເຈົ້າດ້ວຍການອ້ອນວອນ. ໃນຕອນຕົ້ນຂໍ້ 8 ໄດ້ກ່າວເປັນຄຳປະຕິຍານວ່າ "ຂ້ານ້ອຍຈະຮັກສາກົດລະບຽບຂອງພຣະອົງ." ຜູ້ຂຽນເພງສັຣເສີນໄດ້ຕັດສິນໃຈ ແລະພ້ອມທີ່ຈະດຳລົງຊີວິດດ້ວຍການເຊື່ອຟັງພຣະຄຳຂອງພຣະເຈົ້າ.

ເມື່ອເຮົາເຮັດຕາມຕອນຕົ້ນໃນພຣະຄຳຂໍ້ທີ 8 ພວກເຮົາກໍຈະໄດ້ຮັບຕາມຕອນປາຍນຳທີ່ກ່າວວ່າ; "ຢ່າປະລະຂ້ານ້ອຍເລີຍ". ຜູ້ຂຽນພຣະທັມເພງສັຣເສີນຍອມຮັບວ່າເພິ່ນບໍ່ສາມາດເຊື່ອຟັງໄດ້ດ້ວຍກຳລັງຂອງເພິ່ນເອງ ດັ່ງນັ້ນເພິ່ນຈຶ່ງອ້ອນວອນວ່າການຊົງສະຖິດຢູ່ນຳຂອງພຣະເຈົ້າຈະຊ່ວຍຊູເພິ່ນແລະເພີ້ມກຳລັງໃຫ້ເພິ່ນເຮັດໄດ້. ຜູ້ຂຽນພຣະທັມເພງສັຣເສີນບໍ່ເຄີຍຄິດວ່າພຣະເຈົ້າຜູ້ສັດຊື່ຈະປະຖິ້ມເພິ່ນ(ເບິ່ງ ຮຣ 13:5) ແຕ່ເພິ່ນໄດ້ສະແດງອອກເຖິງການເພິ່ງພາໃນການຊົງສະຖິດຢູ່ນຳຂອງພຣະເຈົ້າເພື່ອເພິ່ນຈະມີຊີວິດຢູ່ຢ່າງເຊື່ອຟັງ.

| |
|---|
| *ທ່ານຈະເຮັດຢ່າງໃດ ເພື່ອໃຫ້ພຣະຄຳຂອງພຣະເຈົ້າມີອິດທິພົນໃນຊີວິດຂອງທ່ານຫລາຍຂຶ້ນ?* |

## ນຳໃຊ້ໃນຊີວິດ

ທ່ານຈະມີຄວາມຍິນດີໃນການສະແຫວງພຣະເຈົ້າໃນອາທິດໜ້ານີ້ໄດ້ຢ່າງໃດ? ໃຫ້ພິຈາຣະນາຄຳແນະນຳລົງໄປນີ້:

- **ອ່ານພຣະຄັມພີແຕ່ລະວັນ**. ມີແຜນການຫລາຍໆວິທີທີ່ແນະນຳໃຫ້ອ່ານພຣະຄັມພີ ເຂົ້າໄປໃນ internet: DevoHub.com ເພື່ອກວດເບິ່ງ. ເລືອກເອົາຕາມໃຈແລະເລີ້ມຕົ້ນເຂົ້າເຝົ້າພຣະເຈົ້າສ່ວນຕົວດ້ວຍການອ້ອນວອນ.

- **ຈະເຣີນຂຶ້ນດ້ານຄວາມເຊື່ອ.** ຖາມຕົນເອງວ່າມີບ່ອນໃດໃນຊີວິດທີ່ທ່ານຕ້ອງການປັບປຸງໃຫ້ດີຂຶ້ນບໍ່? ເຈາະເລິກລົງໄປໃນພຣະຄັມຂອງພຣະເຈົ້າໃນບ່ອນທ່ານຢາກຮູ້ເພື່ອຈະເຣີນຂຶ້ນ. ຍອມມອບຕົວເອງຕໍ່ພຣະທັມແລະຄວາມຈິງຂອງພຣະເຈົ້າ. ເຊື່ອຟັງ ແລະໄວ້ວາງໃຈໃນຄຳສັນຍາຂອງພຣະເຈົ້າ.

- **ສິດສອນຜູ້ທີ່ເຊື່ອໃໝ່.** ທາງນຶ່ງທີ່ທ່ານຕ້ອງການຢາກສອນຕົນເອງໃນການອ່ານພຣະທັມຂອງພຣະເຈົ້າຄືໃຫ້ໃຊ້ເວລາສິດສອນຄົນອື່ນ. ການເຮັດດັ່ງນີ້ທ່ານຈະເຮັດໃຫ້ຕົນເອງຮູ້ວ່າຍັງຂາດຄວາມຮູ້ແລະການປະຕິບັດແລະທ່ານຈະຊອກເວລາອ່ານພຣະທັມຂອງພຣະເຈົ້າເພີ້ມຂຶ້ນ.

ມັນອາດເປັນສິ່ງແປກໃນເມື່ອທ່ານຄິດວ່າພຣະຄັມພີເປັນບໍ່ເກີດຂອງຄວາມຊົມຊື່ນຍິນດີ ແຕ່ໃຫ້ຮູ້ເຖິງວ່ານັກປະພັດເພງສັຣເສີນໄດ້ຮູ້ເຖິງເຣື່ອງນີ້ມາແລ້ວ ເພິ່ນຈຶ່ງໄດ້ຈົດໄວ້ໃຫ້ພວກເຮົາໄດ້ອ່ານເພື່ອພວກເຮົາຈະພົບກັບຄວາມຍິນດີນີ້ເໝືອນກັນ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ BV